ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ** ເລກທີ /ກວຕ

ນະຄອນຫຼວງວຽງຈັນ, ວັນທີ

# ຂໍ້ຕົກລົງ

# ວ່າດ້ວຍ ລາງວັນຄຸນນະພາບແຫ່ງຊາດ

- ອີງຕາມ ກົດໝາຍວ່າດ້ວຍ ມາດຕະຖານ (ສະບັບປັບປຸງ) ເລກທີ 49/ສພຊ, ວັນທີ 18 ກໍລະກົດ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017;
- ອີງຕາມ ການສະເໜີ ຂອງກົມມາດຕະຖານ ແລະ ວັດແທກ ເລກທີ 0113/ກວຕ-ກມວ, ລົງວັນທີ 17 ມັງກອນ ປີ 2018

## ລັດຖະມົນຕີກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດກ່ຽວກັບ ເງື່ອນໄຂ, ລະບຽບການຂອງບັນດາວິສາຫະກິດທີ່ມີຈຸດປະສົງເຂົ້າຮ່ວມການແຂ່ງຂັນຄັດເລືອກ, ຂັ້ນຕອນການພິຈາລະນາ, ປະເພດ ແລະ ການກຳນົດວັນມອບລາງວັນຄຸນນະພາບແຫ່ງຊາດ; ໂຄງປະກອບ, ຂອບເຂດສິດ, ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ບໍລິຫານລາງວັນຄຸນນະພາບແຫ່ງຊາດ ເພື່ອເປັນບ່ອນອີງໃນການຍ້ອງຍໍສັນລະເສີນໃຫ້ແກ່ ວິສາຫະກິດທີ່ປະສົບຜົນສຳເລັດ ໃນການຄຸ້ມຄອງບໍລິຫານການຜະລິດ ແລະ ບໍລິການ ຢູ່ພາຍໃນປະເທດ ຊຶ່ງເປັນທີ່ຍອມຮັບທາງດ້ານຄຸນະພາບ, ແນ່ໃສ່ປະກອບສ່ວນໃນການຊຸກຍູ້ ສົ່ງເສີມຍົກສູງຄຸນນະພາບ ແລະ ປະສິດທິພາບ ໃນການຜະລິດ ແລະ ການບໍລິການ, ທັງເປັນການໂຄສະນາແຂ່ງຂັນ ໃນການຄຸ້ມຄອງບໍລິຫານການຜະລິດ ແລະ ການບໍລິການ ຂອງບັນດາວິສາຫະກິດຢູ່ໃນ ສປປ ລາວ ໃຫ້ມີຄຸນນະພາບດີ ສອດຄ່ອງກັບລະບຽບຫຼັກການ ທີ່ກຳນົດໄວ້.

**ມາດຕາ 2 ລາງວັນຄຸນນະພາບແຫ່ງຊາດ**

ລາງວັນຄຸນນະພາບແຫ່ງຊາດລາວ ຊຽນອັກສອນຫຍໍ້ວ່າ " **ລຄຊ** " ຊຽນເປັນພາສາສາກົນວ່າ Lao National Quality Award **(LQA)** ແມ່ນຮູບການຍ້ອງຍໍ ສັນລະເສີນໃຫ້ແກ່ວິສາຫະກິດ ທີ່ມີການຄຸ້ມຄອງ, ບໍລິຫານ ແລະ ບໍລິການ ການຜະລິດຂອງຕົນອອກສູ່ສັງຄົມ ທີ່ມີຄຸນນະພາບດີເດັ່ນລະດັບຊາດ ແລະ ມີການເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອົງການຄຸ້ມຄອງ ແລະ ບໍລິຫານລາງວັນຄຸນນະພາບແຫ່ງຊາດ** ໝາຍເຖິງ ການຈັດຕັ້ງ ທີ່ສ້າງຂຶ້ນມາ ເພື່ອເຮັດໜ້າທີ່ໃນການ ກວດກາ ແລະ ຕີລາຄາ ລະບົບການຄຸ້ມຄອງ, ບໍລິຫານ ການຜະລິດ ແລະ ການບໍລິການ ຂອງບັນດາວິສາຫະກິດທີ່ເຂົ້າຮ່ວມການແຂ່ງຂັນ ເພື່ອຄັດເລືອກ ແລະ ພິຈາລະນາການໃຫ້ ລຄຊ;
2. **ສະພາລາງວັນຄຸນນະພາບແຫ່ງຊາດ** ໝາຍເຖິງ ການຈັດຕັ້ງທີ່ສ້າງຂຶ້ນມາເພື່ອ ກວດກາ, ພິຈາລະນາ ການຕີລາຄາປະເມີນຜົນຂອງຄະນະກຳມະການຄັດເລືອກ ເພື່ອນຳສະເໜີ ລາຍຊື່ບັນດາວິສາຫະກິດທີ່ດີເດັ່ນເຖິງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ພິຈາລະນາໃຫ້ ລຄຊ;
3. **ກຳມະການການຄັດເລືອກ** ໝາຍເຖິງ ຄະນະກຳມະການທີ່ຈັດຕັ້ງຂຶ້ນມາເພື່ອ ດຳເນີນການຕີລາຄາປະເມີນຜົນ ແລະ ໃຫ້ຄະແນນ ລະບົບການຄຸ້ມຄອງບໍລິຫານ ການຜະລິດ ແລະ ການບໍລິການຂອງບັນດາວິສາຫະກິດທີ່ເຂົ້າຮ່ວມການແຂ່ງຂັນ ເພື່ອນຳສະເໜີສະພາລາງວັນໃນການພິຈາລະນາໃຫ້ລາງວັນຄຸນນະພາບແຫ່ງຊາດ;
4. **ຜູ້ເຂົ້າຮ່ວມ** ໝາຍເຖິງ ບັນດາວິສາຫະກິດ ທີ່ດຳເນີນການຜະລິດ ແລະ ການບໍລິການຕ່າງໆ ທີ່ໄດ້ຈົດທະບຽນ ເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບ ລຄຊ;
5. **ການຜະລິດ ແລະ ການບໍລິການຂະໜາດໃຫຍ່** ໝາຍເຖິງ ບຸກຄົນ ແລະ ວິສາຫະກິດ ທີ່ທຳການເຄື່ອນໄຫວທຸລະກິດ:
   - ສຳຫຼັບການຜະລິດສິນຄ້າ ໝາຍເຖິງ ວິສາຫະກິດ ທີ່ນຳໃຊ້ແຮງງານໃນການຜະລິດ ແລະ ບໍລິການ ສະເລ່ຍປະຈຳປີແຕ່ 100 ແຮງງານຂຶ້ນໄປ, ມີມູນຄ່າຊັບສິນທັງໝົດຫຼາຍກວ່າ ສີ່ພັນລ້ານກີບ ແລະ ມີຍອດລາຍຮັບທຸລະກິດປະຈຳປີຫຼາຍກວ່າ ສີ່ພັນລ້ານກີບ;
   - ສຳຫຼັບການບໍລິການ ໝາຍເຖິງ ວິສາຫະກິດ ທີ່ນຳໃຊ້ແຮງງານໃນການຜະລິດ ແລະ ບໍລິການສະເລ່ຍປະຈຳປີແຕ່ 100 ແຮງງານຂຶ້ນໄປ, ມີມູນຄ່າຊັບສິນທັງໝົດຫຼາຍກວ່າ ຫົກພັນລ້ານກີບ ແລະ ມີຍອດລາຍຮັບທຸລະກິດປະຈຳປີຫຼາຍກວ່າ ສີ່ພັນລ້ານກີບ.
6. **ການຜະລິດ ແລະ ການບໍລິການຂະໜາດກາງ ແລະ ນ້ອຍ** ໝາຍເຖິງ ບຸກຄົນ ແລະ ວິສາຫະກິດທີ່ທຳການເຄື່ອນໄຫວທຸລະກິດ:

- ສຳຫຼັບການຜະລິດສິນຄ້າ ໝາຍເຖິງ ວິສາຫະກິດ ທີ່ນຳໃຊ້ແຮງງານໃນການຜະລິດ ແລະ ບໍລິການ ສະເລ່ຍປະຈຳປີຕ່ຳກວ່າ 100 ແຮງງານ, ມີມູນຄ່າຊັບສິນທັງໝົດຕ່ຳກວ່າ ສີ່ພັນລ້ານກີບ ແລະ ມີຍອດລາຍຮັບທຸລະກິດປະຈຳປີຕ່ຳກວ່າ ສີ່ພັນລ້ານກີບ;

7. ສຳຫຼັບການບໍລິການ ໝາຍເຖິງ ວິສາຫະກິດ ທີ່ນຳໃຊ້ແຮງງານໃນການຜະລິດ ແລະ ບໍລິການ ສະເລ່ຍປະຈຳປີຕ່ຳກວ່າ 100 ແຮງງານ, ມີມູນຄ່າຊັບສິນທັງໝົດຕ່ຳກວ່າ ຫົກພັນລ້ານກີບ ແລະ ມີຍອດລາຍຮັບທຸລະກິດປະຈຳປີຕ່ຳກວ່າ ສີ່ພັນລ້ານກີບ.

8. **ວິສາຫະກິດ** ໝາຍເຖິງ ການຈັດຕັ້ງດຳເນີນທຸລະກິດຂອງ ບຸກຄົນ ຫຼື ນິຕິບຸກຄົນ ຊຶ່ງປະກອບດ້ວຍ ຊື່, ທຶນ, ການບໍລິຫານຈັດການ, ສຳນັກງານ ແລະ ໄດ້ຂຶ້ນທະບຽນວິສາຫະກິດ ຖືກຕ້ອງຕາມກົດໝາຍ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບ ລຄຊ ແລະ ເຂົ້າຮ່ວມໃນຂະບວນການພິຈາລະນາຄັດເລືອກ ການໃຫ້ລາງວັນຄຸນນະພາບແຫ່ງຊາດໃນທົ່ວປະເທດ.

## ໝວດທີ 2
## ປະເພດ, ເງື່ອນໄຂ, ເອກະສານ ແລະ ຂັ້ນຕອນ ຂອງຜູ້ເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບລາງວັນຄຸນນະພາບແຫ່ງຊາດ

**ມາດຕາ 5 ປະເພດ ຜູ້ເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບ ລຄຊ**

ບັນດາຜູ້ເຂົ້າຮ່ວມໃນການແຂ່ງຂັນຄັດເລືອກຮັບ ລຄຊ ແມ່ນວິສາຫະກິດທີ່ດຳເນີນການຜະລິດ ແລະ ການບໍລິການຕ່າງໆ ທີ່ໄດ້ຈົດທະບຽນເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບ ລຄຊ, ໄດ້ຈັດແບ່ງເປັນ 4 ປະເພດ ດັ່ງນີ້:

1. ວິສາຫະກິດ ການຜະລິດຂະໜາດໃຫຍ່;
2. ວິສາຫະກິດ ການຜະລິດຂະໜາດກາງ ແລະ ນ້ອຍ;
3. ວິສາຫະກິດ ການບໍລິການຂະໜາດໃຫຍ່;
4. ວິສາຫະກິດ ການບໍລິການຂະໜາດກາງ ແລະ ນ້ອຍ.

ຜູ້ເຂົ້າຮ່ວມທີ່ໄດ້ຮັບ ລຄຊ ແມ່ນຈະໄດ້ຮັບໂລ້ລາງວັນ ຕາມຕົວແບບ ທີ່ໄດ້ກຳນົດໄວ້.

**ມາດຕາ 6 ເງື່ອນໄຂ ຜູ້ເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບ ລຄຊ**

1. ຜູ້ເຂົ້າຮ່ວມໃນການແຂ່ງຂັນຄັດເລືອກຮັບ ລຄຊ ແມ່ນວິສາຫະກິດ ທີ່ມີເງື່ອນໄຂຄົບຖ້ວນຖືກຕ້ອງຕາມລະບຽບກົດໝາຍ, ໄດ້ມີການເຄື່ອນໄຫວທຸລະກິດ ທຳການຜະລິດ ແລະ ການບໍລິການຢ່າງຕໍ່ເນື່ອງຢູ່ ສປປ ລາວ ເປັນເວລາຢ່າງໜ້ອຍ 36 ເດືອນ;

2. ມີເຄື່ອງໝາຍການຄ້າ ແລະ ລະບົບການຄຸ້ມຄອງບໍລິຫານຄຸນນະພາບ;
3. ວິສາຫະກິດເຂົ້າຮ່ວມການຄັດເລືອກ ທີ່ໄດ້ຮັບລາງວັນໃນປີຜ່ານມາ ຖ້າມີເງື່ອນໄຂຄົບຖ້ວນ ຕາມຂໍ້ 1 ມາດຕາ 6 ເທິງນີ້ແມ່ນ ມີສິດເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບລາງວັນຄຸນນະພາບແຫ່ງຊາດ.

### ມາດຕາ 7 ເອກະສານປະກອບ ໃນການຈົດທະບຽນເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບ ລຄຊ

ວິສາຫະກິດ ທີ່ມີຈຸດປະສົງເຂົ້າຮ່ວມການແຂ່ງຂັນ ຕ້ອງໄດ້ປະກອບເອກະສານ ດັ່ງນີ້:

1. ແບບຟອມຄໍາຮ້ອງ;
2. ບົດລາຍງານສະພາບລວມກ່ຽວກັບວິສາຫະກິດຂອງຕົນ;
3. ບົດລາຍງານ ຕີລາຄາດ້ວຍຕົນເອງຕາມ 7 ມາດຖານ ທີ່ລະບຸໄວ້ໃນມາດຕາ 10;
4. ເອກະສານຢັ້ງຢືນ ໃນການນໍາໃຊ້ລະບົບການຄຸ້ມຄອງຄຸນນະພາບທີ່ກ້າວໜ້າ (ສໍາເນົາໃບຢັ້ງຢືນ ແລະ ເອກະສານທີ່ກ່ຽວຂ້ອງ);
5. ເອກະສານຢັ້ງຢືນ ກ່ຽວກັບຄວາມສອດຄ່ອງຂອງຜະລິດຕະພັນສິນຄ້າ ກັບມາດຕະຖານແຫ່ງຊາດ, ລະບຽບການເຕັກນິກທີ່ກ່ຽວຂ້ອງ (ສໍາເນົາ);
6. ບົດລາຍງານ ການຕີລາຄາຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ບົດຄໍາໝັ້ນສັນຍາໃນການປ້ອງກັນສິ່ງແວດລ້ອມທີ່ໄດ້ອະນຸມັດ ແລະ ບັນດາຜົນສັງເກດການຕີລາຄາປະຈໍາປີ ຕາມກົດໝາຍໄດ້ກໍານົດໄວ້ (ສໍາເນົາ);
7. ໃບຢັ້ງຢືນຜົນການປະຕິບັດພັນທະອາກອນໃຫ້ລັດ ແລະ ການປະຕິບັດລະບອບປະກັນສັງຄົມໃຫ້ແກ່ຜູ້ອອກແຮງງານ;
8. ບັນດາເອກະສານອ້າງອີງອື່ນໆທີ່ກ່ຽວຂ້ອງກັບຜົນການເຄື່ອນໄຫວຜະລິດທຸລະກິດ, ຖ້າມີ (ສໍາເນົາ).

### ມາດຕາ 8 ຂັ້ນຕອນ ໃນການຈົດທະບຽນເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບ ລຄຊ

ວິສາຫະກິດ ທີ່ມີຈຸດປະສົງເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບ ລຄຊ ຕ້ອງໄດ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຈົດທະບຽນເຂົ້າຮ່ວມການແຂ່ງຂັນຄັດເລືອກ ລຄຊ ກ່ອນວັນທີ 01 ເດືອນເມສາ ຂອງແຕ່ລະປີ;
2. ຍື່ນຄໍາຮ້ອງ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງໃນການເຂົ້າຮ່ວມການແຂ່ງຂັນຄັດເລືອກ ລຄຊ ຢູ່ກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ກ່ອນວັນທີ 15 ເດືອນມິຖຸນາ ຂອງແຕ່ລະປີ.

### ມາດຕາ 9 ຂໍ້ມູນ ແລະ ຜົນງານ

ຂໍ້ມູນ ແລະ ຜົນງານ ທີ່ນໍາໄປພິຈາລະນາໃນການຄັດເລືອກ ລຄຊ ແມ່ນກໍານົດເອົາຂໍ້ມູນ ແລະ ຜົນງານສະເພາະໜຶ່ງປີ ຂອງປີທີ່ຄັດເລືອກເທົ່ານັ້ນ.

# ໝວດທີ 3

## ມາດຖານ ການຄັດເລືອກ, ປະເພດ ແລະ
## ການກຳນົດວັນມອບລາງວັນຄຸນນະພາບແຫ່ງຊາດ

**ມາດຕາ 10 ມາດຖານ ແລະ ການໃຫ້ຄະແນນ**

ການກຳນົດມາດຖານ ການຄັດເລືອກຜູ້ເຂົ້າຮ່ວມການແຂ່ງຂັນ ເພື່ອຮັບລາງວັນຄຸນນະພາບແຫ່ງຊາດ ແມ່ນອີງໃສ່ 7 ມາດຖານ ມີດັ່ງນີ້:

1. ການວາງແຜນຍຸດທະສາດ
2. ນະໂຍບາຍຕໍ່ລູກຄ້າ ແລະ ຕະຫຼາດ
3. ການຂຶ້ນທະບຽນ ແລະ ການນຳໃຊ້ກາໝາຍມາດຕະຖານຜະລິດຕະພັນສິນຄ້າ
4. ການກວດສອບຄຸນນະພາບ ຜະລິດຕະພັນ ແລະ ສິນຄ້າ
5. ການຄຸ້ມຄອງ ແລະ ພັດທະນາແຮງງານ
6. ການບໍລິຫານ ໃນການຈັດຕັ້ງປະຕິບັດວຽກງານ
7. ໝາກຜົນຂອງການເຄື່ອນໄຫວ

ເນື້ອໃນລະອຽດຂອງແຕ່ລະເງື່ອນໄຂ ແລະ ວິທີການຄັດເລືອກ ແມ່ນປະຕິບັດຕາມ "ເອກສານແນະນຳການຄັດເລືອກລາງວັນຄຸນນະພາບແຫ່ງຊາດ" ຂອງກົມມາດຕະຖານ ແລະ ວັດແທກ.

**ມາດຕາ 11 ປະເພດຂອງລາງວັນຄຸນນະພາບແຫ່ງຊາດ**

ລາງວັນຄຸນນະພາບແຫ່ງຊາດ ແມ່ນມີຮູບແບບເປັນ ໂລ້ລາງວັນ ຊຶ່ງສະລັກຊື່ຂອງຜູ້ໄດ້ຮັບ, ເວລາ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ ຕາມການອອກແບບທີ່ໄດ້ກຳນົດໄວ້. ລາງວັນຄຸນນະພາບແຫ່ງຊາດມີ ສອງປະເພດ ຄື:

1. ລາງວັນຄຳ ຄຸນນະພາບແຫ່ງຊາດ;
2. ລາງວັນເງິນ ຄຸນນະພາບແຫ່ງຊາດ.

**ມາດຕາ 12 ອາຍຸການການນຳໃຊ້ຂອງລາງວັນຄຸນນະພາບແຫ່ງຊາດ**

ລາງວັນຄຸນນະພາບແຫ່ງຊາດແຕ່ລະປະເພດ ມີອາຍຸການນຳໃຊ້ໄດ້ 03 ປີ, ໃນເມື່ອໝົດອາຍຸການນຳໃຊ້ແລ້ວ ແມ່ນບໍ່ສາມາດນຳໄປໂຄສະນາ ຫຼື ນຳໄປໃຊ້ໃສ່ກັບຜະລິດຕະພັນສິນຄ້າຂອຕົນ.

**ມາດຕາ 13 ລາງວັນຄຳ ຄຸນນະພາບແຫ່ງຊາດ**

ລາງວັນຄຳຄຸນນະພາບແຫ່ງຊາດ ແມ່ນຈະໄດ້ມອບໃຫ້ບັນດາວິສາຫະກິດທີ່ໄດ້ຮັບການຕີລາຄາວ່າ ເປັນວິສາຫະກິດທີ່ມີການຄຸ້ມຄອງ ແລະ ບໍລິຫານການຜະລິດ ທີ່ດີເລີດ ໃນຈຳນວນວິສາຫະກິດທີ່ໄດ້ຮັບ ລຄຊ.

ລາງວັນຄຳຄຸນນະພາບແຫ່ງຊາດປະຈຳປີ ມີຈຳນວນ ດັ່ງລຸ່ມນີ້:

1. ວິສາຫະກິດ ການຜະລິດຂະໜາດໃຫຍ່ : ສູງສຸດມີ 03 ລາງວັນ;
2. ວິສາຫະກິດ ການຜະລິດຂະໜາດກາງ ແລະ ນ້ອຍ : ສູງສຸດມີ 03 ລາງວັນ;
3. ວິສາຫະກິດ ການບໍລິການຂະໜາດໃຫຍ່ : ສູງສຸດມີ 03 ລາງວັນ;
4. ວິສາຫະກິດ ການບໍລິການຂະໜາດກາງ ແລະ ນ້ອຍ : ສູງສຸດມີ 03 ລາງວັນ.

ໃນແຕ່ລະຂະແໜງອາຊີບທີ່ເຄື່ອນໄຫວໃນປະເພດດຽວກັນ (ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງ ສະບັບນີ້) ແມ່ນໄດ້ຮັບລາງວັນຄຳຄຸນນະພາບແຫ່ງຊາດ 01 ລາງວັນເທົ່ານັ້ນ.

**ມາດຕາ 14 ລາງວັນເງິນ ຄຸນນະພາບແຫ່ງຊາດ**

ລາງວັນເງິນຄຸນນະພາບແຫ່ງຊາດ ແມ່ນຈະໄດ້ມອບໃຫ້ແກ່ບັນດາວິສາຫະກິດໄດ້ຮັບການຕີລາຄາວ່າ ເປັນວິສາຫະກິດທີ່ມີການຄຸ້ມຄອງ ແລະ ບໍລິຫານການຜະລິດທີ່ດີເດັ່ນ, ໂດຍບໍ່ຈຳກັດຈຳນວນວິສາຫະກິດ ທີ່ໄດ້ຮັບລາງວັນເງິນຄຸນນະພາບແຫ່ງຊາດ.

**ມາດຕາ 15 ການປະກາດ, ແຈ້ງການ ເຂົ້າຮ່ວມການແຂ່ງຂັນຄັດເລືອກ ລຄຊ**

ໃນແຕ່ລະປີ ທີ່ມີການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ແມ່ນອົງການຄຸ້ມຄອງ ແລະ ບໍລິຫານລາງວັນຄຸນນະພາບແຫ່ງຊາດ ຈະມີການປະກາດ, ແຈ້ງການ ທາງສື່ຕ່າງໆ ເພື່ອໃຫ້ວິສາຫະກິດທີ່ມີຈຸດປະສົງເຂົ້າຮ່ວມການແຂ່ງຂັນຮັບຊາບ.

**ມາດຕາ 16 ການກຳນົດປີແຂ່ງຂັນ ແລະ ວັນມອບລາງວັນຄຸນນະພາບແຫ່ງຊາດ**

ສປປ ລາວ ກຳນົດການແຂ່ງຂັນລາງວັນຄຸນນະພາບແຫ່ງຊາດແມ່ນ 03 ປີຕໍ່ໜຶ່ງຄັ້ງ. ໂດຍຖືເອົາວັນທີ 14 ຕຸລາ ຂອງແຕ່ລະປີ ຊຶ່ງແມ່ນວັນມາດຕະຖານສາກົນ ເປັນມື້ມອບລາງວັນຄຸນນະພາບແຫ່ງຊາດ ຫຼື ອີງຕາມຄວາມເໝາະສົມຂອງແຕ່ລະປີ.

## ໝວດທີ 4
## ລະບົບການຈັດຕັ້ງເຄື່ອນໄຫວ ລາງວັນຄຸນນະພາບແຫ່ງຊາດ

**ມາດຕາ 17 ອົງການຄຸ້ມຄອງ ແລະ ບໍລິຫານ ລາງວັນຄຸນນະພາບແຫ່ງຊາດ**

ອົງການຄຸ້ມຄອງ ແລະ ບໍລິຫານລາງວັນຄຸນນະພາບແຫ່ງຊາດ ແມ່ນກົມມາດຕະຖານ ແລະ ວັດແທກ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 18 ສະພາລາງວັນຄຸນນະພາບແຫ່ງຊາດ**

ສະພາລາງວັນຄຸນນະພາບແຫ່ງ ປະກອບດ້ວຍຕົວແທນຈາກ ບັນດາກະຊວງ, ຂະແໜງ ການ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ເຊິ່ງມີຈຳນວນສະມາຊິກແຕ່ 9 ທ່ານຂຶ້ນໄປ. ສະພາລາງວັນຄຸນນະພາບແຫ່ງຊາດ ປະກອບມີ ປະທານ, ຮອງປະທານໜຶ່ງທ່ານ ແລະ ສະມາຊິກ; ຊຶ່ງໄດ້ຮັບການ

ແຕ່ງຕັ້ງຈາກ ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕາມການສະເໜີຂອງກົມມາດຕະຖານ ແລະ ວັດແທກ. ສະພາລາງວັນຄຸນນະພາບແຫ່ງຊາດ ເຮັດວຽກຕາມຫຼັກການ, ປຶກສາຫາລືຄວາມເປັນເອກະພາບ ຂອງສະມາຊິກທີ່ມີໜ້າ. ກອງປະຊຸມຂອງສະພາລາງວັນ ຕ້ອງມີຜູ້ເຂົ້າຮ່ວມຢ່າງໜ້ອຍ 2/3 ຂອງຈຳນວນທັງໝົດ. ການຕັດສິນບັນຫາໃນກອງປະຊຸມຈະມີຜົນ ກໍ່ຕໍ່ເມື່ອມີ 3/5 ສຽງຂອງສະມາຊິກເຂົ້າຮ່ວມເຫັນດີ.

**ມາດຕາ 19 ຄະນະກຳມະການຄັດເລືອກ ລາງວັນຄຸນນະພາບແຫ່ງຊາດ**

ຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ (ຕໍ່ໄປເອີ້ນວ່າ "ກຳມະການຄັດເລືອກ") ປະກອບດ້ວຍ ຕົວແທນຈາກບັນດາຂະແໜງການ, ວິສາຫະກິດ, ພະແນກການ, ຫ້ອງການ ແລະ ການຈັດຕັ້ງກ່ຽວຂ້ອງ ມີຈຳນວນ 7 ທ່ານຂຶ້ນໄປ. ກຳມະການຄັດເລືອກປະກອບມີ ປະທານ, ຮອງປະທານໜຶ່ງທ່ານ ແລະ ຄະນະກຳມະການ; ຊຶ່ງໄດ້ຮັບການແຕ່ງຕັ້ງຈາກ ກົມມາດຕະຖານ ແລະ ວັດແທກ. ກຳມະການຄັດເລືອກ ເຮັດວຽກຕາມຫຼັກການ, ປຶກສາຫາລືຄວາມເປັນເອກະພາບຂອງສະມາຊິກທີ່ມີໜ້າ. ກອງປະຊຸມກຳມະການຄັດເລືອກ ຕ້ອງມີສະມາຊິກເຂົ້າຮ່ວມຢ່າງໜ້ອຍ 2/3 ຂອງຈຳນວນທັງໝົດ. ການຕັດສິນບັນຫາໃນກອງປະຊຸມ ຈະມີຜົນກໍ່ຕໍ່ເມື່ອມີ 3/5 ສຽງຂອງສະມາຊິກ ເຂົ້າຮ່ວມເຫັນດີ.

**ມາດຕາ 20 ກອງເລຂາ**

ກອງເລຂາຂອງ ສະພາລາງວັນ ແລະ ກອງເລຂາຂອງ ກຳມະການຄັດເລືອກ ແມ່ນອັນດຽວກັນ, ຊຶ່ງແມ່ນພະນັກງານຂອງ ກົມມາດຕະຖານ ແລະ ວັດແທກ.

## ໝວດທີ 5
## ຂອບເຂດສິດ ຂອງ ອົງການຄຸ້ມຄອງ ແລະ ບໍລິຫານ, ສະພາລາງວັນ, ຄະນະກຳມະການຄັດເລືອກ ແລະ ກອງເລຂາ

**ມາດຕາ 21 ສິດ ຂອງອົງການຄຸ້ມຄອງ ແລະ ບໍລິຫານ ລາງວັນຄຸນນະພາບແຫ່ງຊາດ**

ກົມມາດຕະຖານ ແລະ ວັດແທກ, ແມ່ນອົງການຄຸ້ມຄອງ ແລະ ບໍລິຫານລາງວັນຄຸນນະພາບແຫ່ງຊາດ, ແມ່ນບ່ອນປະຈຳການຂອງຫ້ອງການລາງວັນຄຸນນະພາບແຫ່ງຊາດ ມີສິດ ດັ່ງນີ້:

1. ເປັນເຈົ້າການ ແລະ ປະສານສົມທົບ ບັນດາການຈັດຕັ້ງທີ່ມີການພົວພັນເຖິງ ການຈັດຕັ້ງເຄື່ອນໄຫວຂອງວຽກງານ ລາງວັນຄຸນນະພາບແຫ່ງຊາດ;
2. ເປັນເຈົ້າການ ໃນການສ້າງ ແລະ ແນະນຳການຈັດຕັ້ງປະຕິບັດ ບັນດານິຕິກຳ, ລະບຽບການ ແລະ ເອກະສານ ວິຊາສະເພາະກ່ຽວກັບ ລຄຊ;
3. ສ້າງຕັ້ງ ກຳມະການຄັດເລືອກ;

4. ກົມມາດຕະຖານ ແລະ ວັດແທກ, ສົມທົບຫ້ອງການ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສຳເລັດໃນດ້ານເອກະສານການອະນຸມັດ ລຄຊ ໃຫ້ແກ່ບັນດາວິສາຫະກິດທີ່ຄົບເງື່ອນໄຂ ກ່ອນວັນທີ 30 ສິງຫາ ໃນແຕ່ລະປີ;
5. ປະເມີນຜົນ ກ່ຽວກັບການຈັດຕັ້ງປະຕິບັດການໃຫ້ລາງວັນຄຸນນະພາບແຫ່ງຊາດ ຕາມການລາຍງານຂອງຄະນະກຳມະການຄັດເລືອກໃຫ້ລາງວັນຄຸນນະພາບແຫ່ງຊາດ;
6. ເຂົ້າຮ່ວມກອງປະຊຸມ ແລະ ການເຄື່ອນໄຫວວຽກງານການໃຫ້ລາງວັນຄຸນນະພາບແຫ່ງຊາດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ຫຼື ການແຕ່ງຕັ້ງຂອງກະຊວງ;
7. ຈັດຕັ້ງພິທີມອບລາງວັນ ໃຫ້ແກ່ວິສາຫະກິດທີ່ໄດ້ຮັບ ລຄຊ ໃນແຕ່ລະປີ;
8. ແກ້ໄຂຄຳຮ້ອງຮຽນ, ກ່າວຫາ ທີ່ພົວພັນເຖິງ ລຄຊ; ລາຍງານ ນຳສະເໜີ ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອແກ້ໄຂ;
9. ນຳສະເໜີ ລາຍຊື່ຂອງຄະນະກຳມະການຄັດເລືອກ ເພື່ອໃຫ້ສະພາ ລຄຊ ເປັນຜູ້ຕັດສິນ;
10. ນຳສະເໜີລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ພິຈາລະນາກ່ຽວກັບ ນະໂຍບາຍ, ລະບຽບການ, ແຜນງານ, ໂຄງການ, ການປັບປຸງ, ກິດຈະກຳຕ່າງໆ ແລະ ການອະນຸມັດກ່ຽວກັບວຽກງານ ການໃຫ້ລາງວັນ ຄຸນນະພາບແຫ່ງຊາດ;

**ມາດຕາ 22 ສິດ ຂອງສະພາລາງວັນ**

ສະພາລາງວັນຄຸນນະພາບແຫ່ງຊາດ ມີສິດ ດັ່ງນີ້:

1. ແຕ່ງຕັ້ງຄະນະກຳມະການຄັດເລືອກ ຕາມການສະເໜີຂອງ ກົມມາດຕະຖານ ແລະ ວັດແທກ;
2. ແຕ່ງຕັ້ງຄະນະກຳມະການຄັດເລືອກ ລົງກວດກາ ແລະ ຕີລາຄາວິສາຫະກິດທີ່ເຂົ້າຮ່ວມການແຂ່ງຂັນຄັດເລືອກວິສາຫະກິດທີ່ດີເດັ່ນ;
3. ກວດກາ ແລະ ພິຈາລະນາ ເອກະສານຄັດເລືອກວິສາຫະກິດທີ່ດີເດັ່ນ ຂອງກຳມະການຄັດເລືອກ;
4. ແຕ່ງຕັ້ງຄະນະກຳມະການຄັດເລືອກ ເພື່ອລົງກວດກາ ແລະ ຕີລາຄາຄືນ ບັນດາວິສາຫະກິດທີ່ດີເດັ່ນ, ຖ້າຫາກມີຄວາມຈຳເປັນ;
5. ສົມທົບ ກົມມາດຕະຖານ ແລະ ວັດແທກ ຄົ້ນຄວ້າ ແລະ ພິຈາລະນາ ລາຍຊື່ຂອງວິສາຫະກິດ ທີ່ຈະນຳສະເໜີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອໃຫ້ລາງວັນຄຸນນະພາບແຫ່ງຊາດ.

**ມາດຕາ 23 ສິດ ຂອງກຳມະການຄັດເລືອກ**

ກຳມະການຄັດເລືອກ ໃຫ້ລາງວັນຄຸນນະພາບແຫ່ງຊາດ ມີສິດ ດັ່ງນີ້:

1. ຕີລາຄາ ແລະ ໃຫ້ຄະແນນ ຕາມ 7 ມາດຖານທີ່ກຳນົດໄວ້ ໃນມາດຕາ 10 ຂໍ້ຕົກລົງສະບັບນີ້ ໃຫ້ແກ່ວິສາຫະກິດ ທີ່ເຂົ້າຮ່ວມການຄັດເລືອກ ດ້ວຍສອງບາດກ້າວ ຄື: ຕີລາຄາດ້ານເອກະສານ ແລະ ຕີລາຄາກັບທີ່ຢູ່ວິສາຫະກິດ;
2. ຕີລາຄາ ແລະ ໃຫ້ຄະແນນຄືນ ບັນດາວິສາຫະກິດທີ່ດີເດັ່ນ, ຕາມການແຕ່ງຕັ້ງຂອງສະພາລາງວັນ;

**ມາດຕາ 24 ສິດ ຂອງກອງເລຂາ**

ກອງເລຂາຂອງອົງການຄຸ້ມຄອງລາງວັນ ແລະ ຄະນະກຳມະການຄັດເລືອກ ມີໜ້າທີ່ ດັ່ງນີ້:

1. ປະຕິບັດ ການເຄື່ອນໄຫວວຽກງານໂຄສະນາ ເຜີຍແຜ່, ຂ່າວສານ ກ່ຽວກັບ ລຄຊ;
2. ຈັດຕັ້ງພິທີມອບລາງວັນປະຈຳປີໃຫ້ແກ່ ບັນດາວິສາຫະກິດທີ່ໄດ້ຮັບລາງວັນ;
3. ເປັນເຈົ້າການ ແລະ ປະສານສົມທົບກັບການຈັດຕັ້ງ ທີ່ພົວພັນເຖິງວຽກງານໃນການເຄື່ອນໄຫວ ລຄຊ;

# ໝວດທີ 6
# ຂອບເຂດ ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ບໍລິຫານ, ສະພາລາງວັນ, ຄະນະກຳມະການຄັດເລືອກ ແລະ ກອງເລຂາ

**ມາດຕາ 25 ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ບໍລິຫານ ລາງວັນຄຸນນະພາບແຫ່ງຊາດ**

ກົມມາດຕະຖານ ແລະ ວັດແທກ, ຊຶ່ງແມ່ນອົງການຄຸ້ມຄອງ ແລະ ບໍລິຫານລາງວັນຄຸນນະພາບແຫ່ງຊາດ, ແມ່ນບ່ອນປະຈຳການ ຂອງຫ້ອງການລາງວັນຄຸນນະພາບແຫ່ງຊາດ ມີໜ້າທີ່ ດັ່ງນີ້:

1. ປະສານສົມທົບກັບ ສະພາລາງວັນ ໃນການພິຈາລະນາຄັດເລືອກວິສາຫະກິດທີ່ດີເດັ່ນ;
3. ຈັດຕັ້ງການກໍ່ສ້າງ, ຝຶກອົບຮົມ ແລະ ອອກໃບຢັ້ງຢືນ ໃຫ້ແກ່ກຳມະການຕີລາຄາ, ສ່ຽວຊານຕີລາຄາ ແລະ ວິສາຫະກິດທີ່ເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບ ລຄຊ;
4. ໂຄສະນາ, ເຜີຍແຜ່ ການເຄື່ອນໄຫວລາງວັນຄຸນນະພາບແຫ່ງຊາດ;
5. ເປັນເຈົ້າການໃນການສ້າງ ແລະ ແນະນຳບັນດາລະບຽບການ, ເອກະສານກ່ຽວກັບ ລຄຊ ໃຫ້ແກ່ພາກສ່ວນກ່ຽວຂ້ອງ;
6. ປະຕິບັດການຮ່ວມມືກັບຂົງເຂດ ແລະ ສາກົນ ໃນການສົ່ງວິສາຫະກິດທີ່ໄດ້ຮັບ ລາງວັນຄຳຄຸນນະພາບແຫ່ງຊາດ ເຂົ້າແຂ່ງຂັນຄັດເລືອກລາງວັນ ລະດັບຂົງເຂດ ແລະ ສາກົນ;
7. ຊີ້ນຳ, ນຳພາ ບັນດາຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ ແລະ ວິສາຫະກິດໃນການຈັດຕັ້ງປະຕິບັດວຽກງານ ການແຂ່ງຂັນລາງວັນຄຸນນະພາບແຫ່ງຊາດ;
8. ລາຍງານການເຄື່ອນໄຫວວຽກງານ ລຄຊ ໃຫ້ແກ່ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຮັບຊາບ.

**ມາດຕາ 26 ໜ້າທີ່ ຂອງສະພາລາງວັນ**

ສະພາລາງວັນຄຸນນະພາບແຫ່ງຊາດ ມີໜ້າທີ່ ດັ່ງນີ້:

1. ນຳສະເໜີ ກົມມາດຕະຖານ ແລະ ວັດແທກ ກ່ຽວກັບ ແຜນການຈັດຕັ້ງ, ປະຕິບັດວຽກງານລາງວັນຄຸນນະພາບແຫ່ງຊາດ;
2. ພິຈາລະນາ, ຕີລາຄາ ແລະ ກວດກາເອກະສານຂອງຄະນະກຳມະການຄັດເລືອກ;

3. ປະຕິບັດການພິຈາລະນາ, ຕີລາຄາ ຢູ່ພື້ນຖານຂອງວິສາຫະກິດ ທີ່ເຂົ້າຮ່ວມຄັດເລືອກ ລຄຊ ໃນເມື່ອມີຄວາມຈຳເປັນ;
4. ຄັດເລືອກວິສາຫະກິດ ທີ່ມີລະບົບການຄຸ້ມຄອງບໍລິຫານການຜະລິດ ຜະລິດຕະພັນ ແລະ ການບໍລິການທີ່ດີເດັ່ນ ນຳສະເໜີລາຍຊື່ໃຫ້ແກ່ ກົມມາດຕະຖານ ແລະ ວັດແທກ ເພື່ອພິຈາລະນາ.

**ມາດຕາ 27 ໜ້າທີ່ ຂອງກຳມະການຄັດເລືອກ**

ກຳມະການຄັດເລືອກ ມີໜ້າທີ່ ດັ່ງນີ້:

1. ຮັບເອກະສານຈົດທະບຽນ ແລະ ເອກະສານເຂົ້າຮ່ວມການແຂ່ງຂັນ ລຄຊ ຂອງບັນດາວິສາຫະກິດ;
2. ປະຕິບັດການພິຈາລະນາ, ຕີລາຄາ ບົນພື້ນຖານເອກະສານ ແລະ ການຕີລາຄາກັບທີ່ ໃຫ້ແກ່ວິສາຫະກິດ ທີ່ເຂົ້າຮ່ວມການແຂ່ງຂັນຄັດເລືອກ ລຄຊ;
3. ສ້າງເອກະສານ ການຕີລາຄາ ແລະ ນຳສະເໜີ ລາຍຊື່ຂອງບັນດາ ວິສາຫະກິດ ຕໍ່ສະພາລາງວັນເພື່ອພິຈາລະນາໃຫ້ລາງວັນຄຸນນະພາບແຫ່ງຊາດ;
4. ພາຍຫຼັງໄດ້ຮັບຜົນການຕີລາຄາຂອງຄະນະກຳມະການຄັດເລືອກແລ້ວ ຕ້ອງລາຍງານເປັນລາຍລັກອັກສອນ ຜົນຂອງການຕີລາຄາ ແລະ ບັນດາຂໍ້ມູນທີ່ກ່ຽວຂ້ອງໃຫ້ແກ່ ວິສາຫະກິດຮັບຊາບ.

**ມາດຕາ 28 ໜ້າທີ່ຂອງກອງເລຂາ**

ກອງເລຂາຂອງອົງການຄຸ້ມຄອງລາງວັນ ແລະ ຄະນະກຳມະການຄັດເລືອກ ມີໜ້າທີ່ ດັ່ງນີ້:

1. ສະເໜີບັນດາລາຍການ, ໂຄງການ, ການເຄື່ອນໄຫວ ແລະ ປະສານງານພາຍໃນ ແລະ ຕ່າງປະເທດກ່ຽວກັບ ລຄຊ ເພື່ອລາຍງານ ກົມມາດຕະຖານ ແລະ ວັດແທກ;
3. ນຳສະເໜີລາຍຊື່ບັນດາສະມາຊິກສະພາລາງວັນຄຸນນະພາບແຫ່ງຊາດ ເພື່ອນຳສະເໜີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ແຕ່ງຕັ້ງ;
4. ສະເໜີສ້າງຕັ້ງຄະນະກຳມະການຄັດເລືອກ ລຄຊ;
7. ນຳສະເໜີ ກົມມາດຕະຖານ ແລະ ວັດແທກ ໃນການປະຕິບັດການຮ່ວມມືສາກົນ ກ່ຽວກັບການສົ່ງວິສາຫະກິດທີ່ໄດ້ຮັບລາງວັນຄຳຄຸນນະພາບແຫ່ງຊາດ ໃນນາມຕາງໜ້າຂອງຊາດ ເພື່ອເຂົ້າຮ່ວມການແຂ່ງຂັນລາງວັນ ຄຸນນະພາບໃນພາກພື້ນ ແລະ ສາກົນ.

## ໝວດທີ 7
## ບາດກ້າວ ແລະ ຂະບວນການ ໃນການພິຈາລະນາໃຫ້ລາງວັນ

**ມາດຕາ 29 ການປະເມີນ ຂອງກຳມະການຄັດເລືອກ**

**1. ການປະເມີນ**

ການຄັດເລືອກວິສາຫະກິດ ເພື່ອເຂົ້າແຂ່ງຂັນຄັດເລືອກຮັບ ລຄຊ ຕ້ອງປະຕິບັດຕາມສອງບາດກ້າວ ຄື:

- **ບາດກ້າວທີ 1: ການປະເມີນ ຕາມເອກະສານ**
  ກອງເລຂາດຳເນີນການກວດກາເອກະສານທີ່ສົ່ງເຂົ້າຮ່ວມການຄັດເລືອກ ລຄຊ ຂອງວິສາຫະກິດ ແລ້ວສົ່ງໃຫ້ ຄະນະກຳມະການຄັດເລືອກຕາມເວລາທີ່ກຳນົດໄວ້.
- **ບາດກ້າວທີ 2: ການປະເມີນ ກັບທີ່**

  ຄະນະກຳມະການຄັດເລືອກ ດຳເນີນການຕີລາຄາກັບທີ່ ບັນດາວິສາຫະກິດທີ່ເຂົ້າຮ່ວມການແຂ່ງຂັນຄັດເລືອກ. ພາຍຫຼັງການຕີລາຄາຕ້ອງສ້າງບົດລາຍງານ ສົ່ງໃຫ້ສະພາລາງວັນຄຸນນະພາບແຫ່ງຊາດ ເພື່ອດຳເນີນການຕໍ່ໄປ. ການປະເມີນກັບທີ່ ຈະດຳເນີນຢູ່ວິສາຫະກິດ ທີ່ຢູ່ໃນລາຍຊື່ຜູ້ເຂົ້າຮ່ວມການແຂ່ງຂັນຄັດເລືອກຮອບສຸດທ້າຍ.

2. **ຜົນການປະເມີນ**

   ອີງຕາມຜົນການຕີລາຄາຕາມເອກະສານ ແລະ ການຕີລາຄາກັບທີ່, ຄະນະກຳມະການຄັດເລືອກຕົກລົງ ສ້າງບັນຊີລາຍຊື່ຂອງບັນດາວິສາຫະກິດ ທີ່ຈະນຳສະເໜີໃຫ້ລາງວັນ ລຄຊ ແລະ ນຳສົ່ງບັນດາເອກະສານທີ່ພົວພັນ (05 ສະບັບ) ໃຫ້ແກ່ສະພາລາງວັນຄຸນນະພາບແຫ່ງຊາດ ໂດຍຜ່ານກອງເລຂາ ກ່ອນວັນທີ 01 ເດືອນສິງຫາ ຂອງແຕ່ລະປີ.

3. **ເອກະສານຂອງຄະນະກຳມະການຄັດເລືອກ ລວມມີ:**

- ເອກະສານທີ່ກ່ຽວຂ້ອງ ຂອງການເຂົ້າຮ່ວມການແຂ່ງຂັນຄັດເລືອກ ລຄຊ ຂອງບັນດາວິສາຫະກິດ ຕາມການກຳນົດໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;
- ຜົນການພິຈາລະນາ ແລະ ຕີລາຄາບັນດາວິສາຫະກິດ ຂອງຄະນະກຳມະການຄັດເລືອກ (ບົດລາຍງານທີ່ເປັນເອກະພາບໃນການຕີລາຄາ, ຕະລາງສັງລວມຄະແນນ, ບົດບັນທຶກຕີລາຄາກັບທີ່ ແລະ ບົດບັນທຶກການປະຊຸມ ຂອງຄະນະກຳມະການຄັດເລືອກ);
- ເອກະສານນຳສະເໜີຂອງຄະນະກຳມະການຄັດເລືອກ ພ້ອມກັບບັນຊີລາຍຊື່ຂອງບັນດາວິສາຫະກິດທີ່ນຳສະເໜີໃຫ້ລາງວັນຄຸນນະພາບແຫ່ງຊາດ.

**ມາດຕາ 30 ຂະບວນການປະເມີນ ຂອງສະພາລາງວັນ**

1. ຂະບວນການຕີລາຄາ

   ສະພາລາງວັນ ຄັດເລືອກໜ່ວຍງານຕີລາຄາ ເພື່ອພິຈາລະນາ ແລະ ກວດກາເອກະສານຂອງບັນດາວິສາຫະກິດ ທີ່ເຂົ້າຮ່ວມຄັດເລືອກ ລຄຊ ທີ່ຄະນະກຳມະການຄັດເລືອກໄດ້ຄົ້ນຄວ້າຕາມເງື່ອນໄຂທີ່ກຳນົດໄວ້. ໃນກໍລະນີຈຳເປັນ ສະພາລາງວັນອາດຄັດເລືອກຄະນະຕີລາຄາ ເພື່ອປະຕິບັດການຕີລາຄາ, ກວດກາບັນດາວິສາຫະກິດຢູ່ກັບທີ່ ເພື່ອເປັນຂໍ້ມູນພື້ນຖານເພີ່ມເຕີມໃຫ້ແກ່ການຄັດເລືອກ ແລະ ໃຫ້ລາງວັນ.

   ກ່ອນວັນທີ 15 ສິງຫາ ແຕ່ລະປີ, ສະພາລາງວັນຄຸນນະພາບແຫ່ງຊາດ ນຳສະເໜີລາຍຊື່ບັນດາວິສາຫະກິດ ທີ່ມີເງື່ອນໄຂຄົບຖ້ວນໃນການໃຫ້ລາງວັນ ແລະ ສ້າງເອກະສານນຳສະເໜີ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອພິຈາລະນາອະນຸມັດ ການໃຫ້ລາງວັນຄຸນນະພາບແຫ່ງຊາດໃນແຕ່ລະປະເພດ;

2. ເອກະສານທີ່ນຳສະເໜີກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ລວມມີ:
- ລາຍງານການຕີລາຄາ ຕາມເອກະສານ ແລະ ການຕີລາຄາກັບທີ່ (ຖ້າມີ);
- ບົດບັນທຶກການປະຊຸມ ຂອງສະພາລາງວັນຄຸນນະພາບ;
- ບັນຊີລາຍຊື່ວິສາຫະກິດ ທີ່ນຳສະເໜີໃຫ້ລາງວັນ;
- ບັນດາເອກະສານຕ່າງໆທີ່ມີການພົວພັນ (ຖ້າມີ);

3. ກອງເລຂາ ສົມທົບກັບຫ້ອງການກະຊວງວິທະຍາສາດ ແລະ ເຕັກໂນໂລຊີສ້າງເອກະສານ ການມອບ ລຄຊ ແລະ ຈັດຕັ້ງພິທີການມອບລາງວັນ ໃຫ້ແກ່ບັນດາວິສາຫະກິດທີ່ໄດ້ ຮັບລາງວັນຄຸນນະພາບແຫ່ງຊາດຕາມ ວັນ ເວລາ ທີ່ກຳນົດໄວ້;
4. ກອງເລຂາ ມີຄວາມຮັບຜິດຊອບໃນການແຈ້ງຜົນ ການພິຈາລະນາການໃຫ້ລາງວັນ ລຄຊ ໃຫ້ແກ່ຄະນະກຳມະການຄັດເລືອກ ພາຍຫຼັງທີ່ມີຂໍ້ຕົກລົງມອບ ລຄຊ ຂອງກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ.

# ໝວດທີ 8
## ງົບປະມານ, ຜົນປະໂຫຍດ ແລະ ຂໍ້ຫ້າມ

### ມາດຕາ 31 ງົບປະມານຮັບໃຊ້ໃນການເຄື່ອນໄຫວ

ງົບປະມານຮັບໃຊ້ໃນການເຄື່ອນໄຫວວຽກງານ ຂອງອົງການຄຸ້ມຄອງລາງວັນຄຸນະພາບແຫ່ງຊາດແມ່ນ ນຳໃຊ້ງົບປະມານຈາກ:

1. ງົບປະມານຂອງກົມມາດຕະຖານ ແລະ ວັດແທກ;
2. ການປະກອບສ່ວນ ອຸປະຖຳຂອງພາກສ່ວນຕ່າງໆທັງພາຍໃນ, ຕ່າງປະເທດ ລວມທັງວິສາຫະກິດທີ່ເຂົ້າຮ່ວມການຄັດເລືອກລາງວັນຄຸນນະພາບແຫ່ງຊາດ.

### ມາດຕາ 32 ຜົນປະໂຫຍດ ຈາກການໄດ້ຮັບລາງວັນຄຸນນະພາບແຫ່ງຊາດ

ວິສາຫະກິດ ທີ່ໄດ້ຮັບ ລຄຊ ຈະໄດ້ຮັບຜົນປະໂຫຍດ ດັ່ງນີ້:

1. ວິສາຫະກິດທີ່ໄດ້ຮັບ ລຄຊ ຈະໄດ້ຮັບການຍ້ອງຍໍຊົມເຊີຍ ແລະ ສັນລະເສີນຜົນງານຕາມລະບຽບກົດໝາຍ ທີ່ກຳນົດໄວ້;
2. ວິສາຫະກິດ ທີ່ໄດ້ຮັບລາງວັນຄຳຄຸນນະພາບແຫ່ງຊາດ ແມ່ນຈະໄດ້ຮັບການຄັດເລືອກເຂົ້າຮ່ວມການແຂ່ງຂັນຄຸນນະພາບດີເດັ່ນ ໃນລະດັບພາກພື້ນ ແລະ ສາກົນ;
3. ວິສາຫະກິດທີ່ໄດ້ຮັບ ລຄຊ ມີສິດໂຄສະນາ, ແຈ້ງຂ່າວ, ເຜີຍແຜ່ຕາມສື່ມວນຊົນຕ່າງໆໃຫ້ຖືກຕ້ອງຕາມຄວາມເປັນຈິງ;

**ມາດຕາ 33 ຂໍ້ຫ້າມ**

ຫ້າມ ວິສາຫະກິດ ມີພຶດຕິກຳທີ່ລະເມີດລາງວັນຄຸນນະພາບແຫ່ງຊາດ ດັ່ງນີ້:

1. ລະເມີດຕໍ່ລະບຽບກົດໝາຍ ທີ່ພົວພັນເຖິງລາງວັນຄຸນນະພາບແຫ່ງຊາດ;
2. ນຳໃຊ້ສັນຍາລັກ ລຄຊ ທີ່ໄດ້ຮັບໃສ່ຜະລິດຕະພັນ ບໍ່ຖືກຕ້ອງຕາມເນື້ອໃນ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 34 ການຜັນຂະຫຍາຍ**

ມອບໃຫ້ອົງການຄຸ້ມຄອງ ແລະ ບໍລິຫານລາງວັນຄຸນນະພາບແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ເປັນອັນລະອຽດ ເພື່ອຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ.

**ມາດຕາ 35 ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ຂະແໜງການ, ພາກສ່ວນຕ່າງໆທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການ ເຄື່ອນໄຫວໃຫ້ລາງວັນຄຸນນະພາບແຫ່ງຊາດ ແລະ ພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ.

**ມາດຕາ 36 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດໃນການຈັດຕັ້ງປະຕິບັດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລະບຽບການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

**ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ**